ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 227 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 02/ສພຊ, ລົງວັນທີ 09 ສິງຫາ 2021 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ, ລົງວັນທີ 06 ກັນຍາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 02 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 09 / 08 / 21

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາ
## ຂອງກົດໝາຍວ່າດ້ວຍຢາເສບຕິດ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝວິສາມັນ ເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ໃນວາລະກອງປະຊຸມ ຄັ້ງວັນທີ 9 ສິງຫາ 2021.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 02 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 9 ສິງຫາ 2021

# ກົດໝາຍວ່າດ້ວຍການປັບປຸງ
# ບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດເນື້ອໃນການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ໃຫ້ມີຄວາມກະຈ່າງແຈ້ງ ແລະ ຮັດກຸມ, ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ ເພື່ອກວດກາ, ຄວບຄຸມ, ສະກັດກັ້ນ, ຕ້ານຢາເສບຕິດ ແລະ ຈຳກັດປາກົດການຫຍໍ້ທໍ້ໃນສັງຄົມ ແນໃສ່ເຮັດໃຫ້ປະເທດຊາດ ປອດຈາກຢາເສບຕິດ ແລະ ມີຄວາມສະຫງົບປອດໄພ.

**ມາດຕາ 2 ມາດຕາຂອງກົດໝາຍທີ່ມີການປັບປຸງ**

ມາດຕາທີ່ມີການປັບປຸງເນື້ອໃນ ມີ ດັ່ງນີ້:

1. **ມາດຕາ 9 ຢາເສບຕິດທີ່ເກືອດຫ້າມ**

   ຢາເສບຕິດທີ່ເກືອດຫ້າມ ແມ່ນ ຢາເສບຕິດ ທີ່ກະຕຸ້ນ ແລະ/ຫຼື ອອກລິດ ຕໍ່ຈິດປະສາດ ຢ່າງຮ້າຍແຮງ ແລະ ບໍ່ອະນຸຍາດນຳໃຊ້ຢ່າງເດັດຂາດ ເຊັ່ນ ເຮໂຣອີນ, ໂຄເຄນ, ຢາອີ, ຢາບ້າ, ຢາໄອສ໌, ເຄຕາມີນ ແລະ ຢາເສບຕິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

2. **ມາດຕາ 10 ຢາເສບຕິດ ແລະ ສານເຄມີທີ່ຖືກຄວບຄຸມການນຳໃຊ້**

   ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ແມ່ນ ສານກະຕຸ້ນ ແລະ/ຫຼື ອອກລິດຕໍ່ຈິດປະສາດ ເຊັ່ນ ມອກຟີນ (Morphine), ຢາຝິ່ນ (Opium), ໂຄເດອີນ (Codeine), ເມທາໂດນ (Methadone), ເຟນຕານີນ (Fentanyl), ມີດາໂຊລາມ (Midazolam), ອາໂມບາບີຕານ (Amobarbital), ອາເຊຕິກ ແອນຮາຍໄດຣ (Acetic anhydrine), ອາເຊຕິນ ຄລໍຣາຍ (Acetyl chloride), ຊຸນຟູລິກ ອາຊິດ (Sulphuric acid), ເອທິນ ອາຊີເຕດ (Ethyl acetate), ຮາຍໂດຣຄຣໍລິກ ອາຊິດ (Hydrochloric acid), ໂປຣປີໂອນີນ ໂຄຣຣາຍ (Propionyl chloride), ໄນຕຣັດ ອອກໄຊ (Nitrous oxide) ແລະ ສານກະຕຸ້ນ ແລະ/ຫຼື ອອກລິດຕໍ່ຈິດປະສາດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ຢາເສບຕິດ ແລະ ສານເຄມີທີ່ຖືກຄວບຄຸມການນໍາໃຊ້ ອະນຸຍາດໃຫ້ນໍາໃຊ້ເຂົ້າໃນວິທະຍາສາດການແພດ, ອຸດສາຫະກໍາ, ກະສິກໍາ ແລະ ອື່ນໆ ໂດຍມີການຄວບຄຸມຢ່າງເຂັ້ມງວດ ຕາມລະບຽບການ.

3. ມາດຕາ 34 ຂອງກາງກ່ຽວກັບຄະດີຢາເສບຕິດ

ຂອງກາງກ່ຽວກັບຄະດີຢາເສບຕິດ ແມ່ນ ຢາເສບຕິດ, ຊັບສິນ, ວັດຖຸສິ່ງຂອງ ແລະ ພາຫະນະ ທີ່ຍຶດໄດ້ ຊຶ່ງເປັນຫຼັກຖານໃຫ້ແກ່ການຈັບຕົວ, ການດໍາເນີນຄະດີ ແລະ ຕັດສິນລົງໂທດຜູ້ກະທໍາຜິດ.

ຂອງກາງທີ່ເປັນຢາເສບຕິດ ຊຶ່ງພົບເຫັນ ແລະ ຍຶດໄດ້ ຕ້ອງກວດກາ, ນັບຈໍານວນ, ຊັ່ງນໍ້າໜັກ, ບັນທຶກ ແລ້ວສົ່ງຕົວຢ່າງຢາເສບຕິດໃຫ້ສູນວິໄຈໃຫ້ວ່ອງໄວ ແລະ ແຈ້ງຜົນການວິໄຈນັ້ນໂດຍໄວ. ຂອງກາງດັ່ງກ່າວ ຕ້ອງຄຸ້ມຄອງ ແລະ ເກັບມ້ຽນຢູ່ບ່ອນທີ່ຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ ຫຼື ສັບປ່ຽນ.

ຂອງກາງທີ່ເປັນ ເພັດ, ຄໍາ, ເງິນ, ວັດຖຸສິ່ງຂອງ, ພາຫະນະ ແລະ ຊັບສິນອື່ນ ບໍ່ອະນຸຍາດໃຫ້ນໍາໃຊ້ເດັດຂາດ ແລະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

ຂອງກາງທີ່ເປັນຢາເສບຕິດ ລວມທັງ ຊັບສິນ, ວັດຖຸສິ່ງຂອງ ຫຼື ພາຫະນະ ທີ່ຍຶດໄດ້ ໂດຍບໍ່ຮູ້ ຫຼື ບໍ່ອາດຮູ້ໄດ້ວ່າຜູ້ໃດເປັນເຈົ້າຂອງ ຕ້ອງມອບໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕໍາຫຼວດ ເປັນຜູ້ຄຸ້ມຄອງ, ເກັບຮັກສາ ຕາມກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ຂໍ້ 4. ມາດຕາ 35 ຂອງກົດໝາຍສະບັບນີ້.

ການມອບຮັບຂອງກາງ ກ່ຽວກັບຄະດີຢາເສບຕິດໃຫ້ກັນລະຫວ່າງອົງການລັດທີ່ກ່ຽວຂ້ອງ ໃນແຕ່ລະຄັ້ງ ຕ້ອງມີການກວດກາຄືນ ແລະ ຢັ້ງຢືນໃຫ້ຖືກຕ້ອງ ຕາມບົດບັນທຶກເບື້ອງຕົ້ນ.

ໃນກໍລະນີທີ່ມີການຮັບສາລະພາບຂອງຜູ້ຖືກຫາ ແຕ່ບໍ່ມີຂອງກາງນັ້ນ ຕ້ອງໄດ້ຊອກຫາພະຍານ, ຫຼັກຖານອື່ນ ໃນຄະດີມາຢັ້ງຢືນ ເພື່ອພິຈາລະນາຕັດສິນ.

4. ມາດຕາ 35 ການຍຶດ, ການອາຍັດ, ການຮິບ ຊັບ ແລະ ວັດຖຸສິ່ງຂອງ

ຊັບສິນ, ພາຫະນະ, ອຸປະກອນ, ບັນຊີເງິນຝາກ ທີ່ພົວພັນກັບຄະດີຢາເສບຕິດ ຕ້ອງຖືກຍຶດ ຫຼື ອາຍັດມາເປັນຂອງກາງ ຕາມກົດໝາຍ ເພື່ອລໍຖ້າສານພິຈາລະນາຕັດສິນ. ໃນກໍລະນີຜູ້ຖືກຫາ ເອົາຕົວຫຼົບໜີ ຫຼື ໂຕນໜີ ຖ້າບຸກຄົນທີ່ເປັນເຈົ້າຂອງ ຊັບສິນ, ພາຫະນະ, ອຸປະກອນ, ບັນຊີເງິນຝາກ ດັ່ງກ່າວ ຫາກບໍ່ເຂົ້າມາພົວພັນເອົາ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ອອກແຈ້ງການ ໂດຍປະກາດຜ່ານພາຫະນະສື່ມວນຊົນ ເປັນຕົ້ນໄປ ໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕໍາຫຼວດ ສະຫຼຸບສໍານວນຄະດີ ເພື່ອສົ່ງໃຫ້ອົງການໄອຍະການປະຊາຊົນຖະແຫຼງຕໍ່ສານປະຊາຊົນພິຈາລະນາຕັດສິນຮິບເປັນຂອງລັດ.

ຂອງກາງທີ່ເສື່ອມຄຸນນະພາບໄວ, ປ່ຽນຮູບງ່າຍ ແລະ ສັດລ້ຽງ ຕ້ອງນໍາອອກປະມູນຂາຍຕາມລະບຽບການ ແລ້ວນໍາເງິນທີ່ໄດ້ຈາກການຂາຍນັ້ນ ເກັບໄວ້ໃນບັນຊີເງິນຝາກຢູ່ໃນຄັງເງິນແຫ່ງຊາດ ຫຼື ເປີດບັນຊີໄວ້ ຢູ່ທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດຂອງລັດ ທີ່ໄດ້ຮັບອະນຸຍາດ ເພື່ອລໍຖ້າຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

ສຳລັບຂອງກາງທີ່ເປັນ ເພັດ, ຄຳ, ເງິນ ແລະ ວັດຖຸມີຄ່າອື່ນ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕ້ອງເອົາໄປພິສູດເພື່ອຢັ້ງຢືນຄຸນລັກສະນະ, ພ້ອມທັງຊັ່ງນ້ຳໜັກ ຂອງວັດຖຸດັ່ງກ່າວ ໂດຍໄວ ຢ່າງເປັນລາຍລັກອັກສອນ ກ່ອນນຳໄປຝາກໄວ້ຢູ່ທະນາຄານແຫ່ງ ສປປ ລາວ ຫຼື ທະນາຄານທຸລະກິດຂອງລັດ ທີ່ໄດ້ຮັບອະນຸຍາດ.

ຊັບສິນ, ພາຫະນະ, ອຸປະກອນ ແລະ ຂອງກາງອື່ນ ທີ່ພົວພັນກັບການກະທຳຜິດກ່ຽວກັບຢາເສບຕິດ ຈະຖືກຮິບ ຫຼື ສົ່ງຄືນຕາມຄຳຕັດສິນຂອງສານ.

ໃນກໍລະນີ ຊັບສິນ, ພາຫະນະ, ອຸປະກອນ ທີ່ຊື້ເປັນເງິນຜ່ອນ ທີ່ພົວພັນກັບການກະທຳຜິດກ່ຽວກັບຢາເສບຕິດ ໃຫ້ສານພິຈາລະນາຕັດສິນຮິບເປັນຂອງລັດ.

ໃນກໍລະນີ ຊັບສິນ, ພາຫະນະ, ອຸປະກອນ ທີ່ ເຊົ່າຊື້, ເຊົ່າ, ຢືມ ທີ່ພົວພັນກັບການກະທຳຜິດກ່ຽວກັບຢາເສບຕິດ ໃຫ້ສານພິຈາລະນາຕັດສິນຮິບເປັນຂອງລັດ ຖ້າເຈົ້າຂອງຫາກບໍ່ມີຄວາມບໍລິສຸດໃຈ ຫຼື ມີຄວາມຈຳເປັນຮິບ ເພື່ອຮັບປະກັນຄວາມສະຫງົບຂອງສັງຄົມ.

ໃນກໍລະນີ ຊັບສິນ, ພາຫະນະ, ອຸປະກອນ ຢູ່ ສປປ ລາວ ຂອງຜູ້ກະທຳຜິດ ທີ່ຖືກສານຕັດສິນ ກ່ຽວກັບຢາເສບຕິດຢູ່ຕ່າງປະເທດ ໂດຍມີຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ ສະຫຼຸບຂຶ້ນບັນຊີ ເພື່ອສົ່ງໃຫ້ອົງການໄອຍະການປະຊາຊົນຖະແຫຼງຕໍ່ສານປະຊາຊົນພິຈາລະນາຕັດສິນຮິບເປັນຂອງລັດ, ເວັ້ນເສຍແຕ່ມີການຮ້ອງຂໍການຮ່ວມມືລະຫວ່າງປະເທດທາງອາຍາ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ.

ຂອງກາງທີ່ເປັນຢາເສບຕິດ ຕ້ອງໄດ້ທຳລາຍ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

## 5. ມາດຕາ 36 ການຊັດທອດ

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍບໍ່ມີຂອງກາງ, ບໍ່ມີຫຼັກຖານຮັດກຸມ ແລະ ບຸກຄົນດັ່ງກ່າວ ປະຕິເສດບໍ່ຮັບຮູ້ ກໍໃຫ້ຖືວ່າບໍ່ມີການກະທຳຜິດ.

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍມີຂອງກາງ ຖ້າບຸກຄົນດັ່ງກ່າວ ຮັບສາລະພາບ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍມີຂອງກາງ ໜັກແໜ້ນຮັດກຸມ ແຕ່ບຸກຄົນດັ່ງກ່າວ ຫາກປະຕິເສດບໍ່ຮັບຮູ້ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

ການຊັດທອດໃສ່ບຸກຄົນໃດໜຶ່ງ ໂດຍບໍ່ມີຂອງກາງ ແຕ່ມີຫຼັກຖານໜັກແໜ້ນຮັດກຸມ ແຕ່ບຸກຄົນດັ່ງກ່າວປະຕິເສດບໍ່ຮັບຮູ້ ກໍໃຫ້ດຳເນີນຄະດີຕາມກົດໝາຍ.

ໃນກໍລະນີ ມີການຊັດທອດຈາກຜູ້ຖືກຫາຫຼາຍຄົນ ວ່າຜູ້ຖືກຊັດທອດເປັນຕົວການ ຫຼື ຮ່ວມຂະບວນການກ່ຽວກັບຢາເສບຕິດ ໃຫ້ຖືເປັນຂໍ້ມູນຫຼັກຖານແກ່ການດຳເນີນຄະດີຕໍ່ບຸກຄົນທີ່ຖືກຊັດທອດດັ່ງກ່າວ ຕາມກົດໝາຍ.

## 6. ມາດຕາ 50 ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

ການຄຸ້ມຄອງ ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ມີ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກະຊວງປ້ອງກັນຄວາມສະຫງົບ;

2. ຂັ້ນແຂວງ ແມ່ນ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ.

ກອງທຶນດັ່ງກ່າວ ນຳໃຊ້ເຂົ້າໃນວຽກງານທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

7. ມາດຕາ 56 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປູກ, ຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຄອບຄອງ, ຂົນສົ່ງ, ນຳເຂົ້າ, ສົ່ງອອກ ຫຼື ນຳຢາເສບຕິດ ຜ່ານ ສປປ ລາວ;

2. ອຳນວຍຄວາມສະດວກ ໃນການ ປູກ, ຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຄອບຄອງ, ຂົນສົ່ງ, ນຳເຂົ້າ, ສົ່ງອອກ ຫຼື ນຳຢາເສບຕິດ ຜ່ານ ສປປ ລາວ;

3. ເສບ ຫຼື ຈັດບໍລິການໃຫ້ເສບ, ໂຄສະນາ, ຊັກຊວນ, ຊຸກຍູ້ສົ່ງເສີມ, ຫຼອກລວງ ແລະ ບັງຄັບ ໃຫ້ຜູ້ອື່ນໃຊ້ຢາເສບຕິດ;

4. ປົດບັງ, ປົກປ້ອງ ຫຼື ຊຸກເຊື່ອງ ສະມາຊິກຄອບຄົວ ຫຼື ບຸກຄົນອື່ນທີ່ຕິດຢາເສບຕິດ;

5. ເປີດເຜີຍ ຂໍ້ມູນ ຂອງຜູ້ລາຍງານ ກ່ຽວກັບຄະດີຢາເສບຕິດ;

6. ຂັດຂວາງ, ນາບຂູ່, ແກ້ແຄ້ນ ຜູ້ເຂົ້າຮ່ວມໃນການສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ການປິ່ນປົວຜູ້ຕິດຢາເສບຕິດ;

7. ພົວພັນກັບການດຳເນີນຄະດີກ່ຽວກັບຢາເສບຕິດ ຖ້າບໍ່ໄດ້ຮັບມອບສິດຕາມກົດໝາຍ ຫຼື ບໍ່ແມ່ນຍາດພີ່ນ້ອງຂອງຜູ້ຖືກຫາ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

8. ມາດຕາ 61 ອົງການຄຸ້ມຄອງ ວຽກງານຢາເສບຕິດ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຢາເສບຕິດ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງຍຸຕິທຳ, ກະຊວງປ້ອງກັນປະເທດ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຢາເສບຕິດ ປະກອບດ້ວຍ:

1. ກະຊວງປ້ອງກັນຄວາມສະຫງົບ;

2. ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ;

3. ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ.

9. ມາດຕາ 63 ສິດ ແລະ ໜ້າທີ່ຂອງ ກະຊວງປ້ອງກັນຄວາມສະຫງົບ

ໃນການຄຸ້ມຄອງວຽກງານຢາເສບຕິດ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງຮ່າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາເສບຕິດ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາເສບຕິດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ, ສຶກສາອົບຮົມສັງຄົມ ກ່ຽວກັບການສະກັດກັ້ນ ແລະ ຕ້ານຢາເສບຕິດ;

4. ຊີ້ນຳການຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວປະເທດ;

5. ຊອກຮູ້ ແລະ ເກັບກຳຂໍ້ມູນ ຂ່າວສານ ກ່ຽວກັບຢາເສບຕິດທີ່ເກືອດຫ້າມ, ຢາເສບຕິດ ແລະ ສານເຄມີທີ່ຖືກຄວບຄຸມການນຳໃຊ້;

6. ໃຫ້ການຝຶກອົບຮົມ, ບຳລຸງ, ສ້າງ ເຈົ້າໜ້າທີ່ເຮັດວຽກງານ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວປະເທດ;

7. ຊີ້ນຳການດຳເນີນການສືບສວນ-ສອບສວນ ຄະດີກ່ຽວກັບຢາເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

8. ເປັນເຈົ້າການປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການປິ່ນປົວ, ຟື້ນຟູ ສົ່ງເສີມສຸຂະພາບ ແລະ ຝຶກວິຊາຊີບ ໃຫ້ຜູ້ຕິດຢາເສບຕິດ;

9. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານສຳຫຼວດ, ກວດກາ ການລັກລອບ ປູກພືດທີ່ມີສານເສບຕິດ ໃນຂອບເຂດທົ່ວປະເທດ;

10. ປະສານສົມທົບ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການດຳເນີນການສຳຫຼວດເບື້ອງຕົ້ນ ແລະ ປະເມີນພິນຮ້າຍ ຂອງຢາເສບຕິດ;

11. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຢາເສບຕິດ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາຢາເສບຕິດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

10. ມາດຕາ 64 ສິດ ແລະ ໜ້າທີ່ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ

ໃນການຄຸ້ມຄອງວຽກງານຢາເສບຕິດ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາເສບຕິດ ມາເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;

2. ໂຄສະນາ, ສຶກສາອົບຮົມສັງຄົມ ກ່ຽວກັບການສະກັດກັ້ນ ແລະ ຕ້ານຢາເສບຕິດ;

3. ຄຸ້ມຄອງ, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດ ການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

4. ຊອກຮູ້ ແລະ ເກັບກຳຂໍ້ມູນ ຂ່າວສານ ກ່ຽວກັບຢາເສບຕິດທີ່ເກືອດຫ້າມ, ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້;

5. ໃຫ້ການຝຶກອົບຮົມ, ບຳລຸງ, ສ້າງ ແລະ ຍົກລະດັບ ໃຫ້ເຈົ້າໜ້າທີ່ທີ່ເຮັດວຽກງານ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

6. ດຳເນີນການສືບສວນ-ສອບສວນ ຄະດີກ່ຽວກັບຢາເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ປະສານສົມທົບ ກັບພະແນກການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານສຳຫຼວດ, ກວດກາການລັກລອບ ປູກພືດທີ່ມີສານເສບຕິດ;

8. ປະສານງານກັບຂະແໜງການອື່ນທີ່ກ່ຽວຂ້ອງ ໃນການປິ່ນປົວ, ຟື້ນຟູ ສົ່ງເສີມສຸຂະພາບ ແລະ ຝຶກວິຊາຊີບ ໃຫ້ຜູ້ຕິດຢາເສບຕິດ;

9. ປະສານສົມທົບກັບພະແນກການ, ອົງການອື່ນທີ່ກ່ຽວຂ້ອງ ໃນການດຳເນີນການສຳຫຼວດເບື້ອງຕົ້ນ ແລະ ປະເມີນຜົນຮ້າຍ ຂອງຢາເສບຕິດ;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຢາເສບຕິດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາຢາເສບຕິດ ຕໍ່ກະຊວງປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**11. ມາດຕາ 65 ສິດ ແລະ ໜ້າທີ່ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຢາເສບຕິດ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຢາເສບຕິດ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ກ່ຽວກັບການສະກັດກັ້ນ ແລະ ຕ້ານຢາເສບຕິດ;

3. ຕິດຕາມ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

4. ຊອກຮູ້ ແລະ ເກັບກຳຂໍ້ມູນ ຂ່າວສານ ກ່ຽວກັບຢາເສບຕິດທີ່ເກືອດຫ້າມ, ຢາເສບຕິດ ແລະ ສານເຄມີ ທີ່ຖືກຄວບຄຸມການນຳໃຊ້;

5. ໃຫ້ການຝຶກອົບຮົມ, ບຳລຸງ, ຍົກລະດັບ ໃຫ້ເຈົ້າໜ້າທີ່ເຮັດວຽກງານ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;

6. ດຳເນີນການສືບສວນ-ສອບສວນ ຄະດີກ່ຽວກັບຢາເສບຕິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານສຳຫຼວດ, ກວດກາການລັກລອບ ປູກພືດທີ່ມີສານເສບຕິດ;

8. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການດຳເນີນການສຳຫຼວດເບື້ອງຕົ້ນ ແລະ ປະເມີນຜົນຮ້າຍຂອງຢາເສບຕິດ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຢາເສບຕິດ ຕາມການມອບໝາຍຂອງຂັ້ນເທິງ;

10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານແກ້ໄຂບັນຫາຢາເສບຕິດ ຕໍ່ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**12. ມາດຕາ 65/1 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນສູງສຸດ**

ໃນການຄຸ້ມຄອງວຽກງານຢາເສບຕິດ ອົງການໄອຍະການປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ກວດກາ ການດຳເນີນຄະດີກ່ຽວກັບຢາເສບຕິດ ໃນຂອບເຂດທົ່ວປະເທດ;

2. ຊີ້ນຳອົງການໄອຍະການປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ແລະ ອົງການໄອຍະການທະຫານ ໃນການຕິດຕາມ ກວດກາ ການດຳເນີນຄະດີ ກ່ຽວກັບຢາເສບຕິດ, ການຮິບຊັບ ແລະ ວັດຖຸສິ່ງຂອງຕ່າງໆ ໃຫ້ຖືກຕ້ອງຕາມຂໍ້ມູນຫຼັກຖານ ແລະ ກົດໝາຍ;

3. ຕິດຕາມກວດກາ ກ່ຽວກັບການດຳເນີນຄະດີ ຂອງອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ການສັ່ງຟ້ອງຜູ້ຖືກຫາຄະດີຢາເສບຕິດ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ເປັນທຳ ແລະ ທັນກັບສະພາບຕົວຈິງ;

4. ປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນວຽກງານຢາເສບຕິດ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**13. ມາດຕາ 65/2 ສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ**

ໃນການຄຸ້ມຄອງວຽກງານຢາເສບຕິດ ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສຳນວນຄະດີ ກ່ຽວກັບຢາເສບຕິດ;

2. ກວດກາຄຳຕັດສິນ ຂອງສານປະຊາຊົນ ພາກ, ແຂວງ, ນະຄອນຫຼວງ, ເຂດ ແລະ ສານທະຫານ ກ່ຽວກັບຄະດີຢາເສບຕິດ ໃນຂອບເຂດທົ່ວປະເທດ;

3. ສິ່ງຄຳຕັດສິນ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ພ້ອມທັງສົ່ງສຳນວນຄະດີໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

4. ປະສານສົມທົບກັບອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບຄະດີຢາເສບຕິດ ເພື່ອພິຈາລະນາຕັດສິນ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ ແລະ ເປັນທຳ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**14. ມາດຕາ 65/3 ສິດ ແລະ ໜ້າທີ່ ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງວຽກງານຢາເສບຕິດ ກະຊວງຍຸຕິທຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ຄຸ້ມຄອງ, ຕິດຕາມ ກວດກາ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃນການປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີຢາເສບຕິດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

2. ປະສານສົມທົບກັບສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີຢາເສບຕິດ;

3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**15. ມາດຕາ 65/4 ສິດ ແລະ ໜ້າທີ່ຂອງ ກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງວຽກງານຢາເສບຕິດ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ກອງພົນ, ກອງພັນໃຫຍ່, ກອງບັນຊາການທະຫານແຂວງ, ນະຄອນຫຼວງ ໃນການກວດກາພື້ນທີ່ລັກລອບປູກຝິ່ນ ແລະ ສະໜັບສະໜູນໃນການເຝົ້າລະວັງ, ຕິດຕາມ ກວດກາ ແລະ ນຳພາກຳລັງເຂົ້າໃນການສະກັດກັ້ນ, ທຳລາຍສວນຝິ່ນທີ່ມີການລັກລອບປູກແຕ່ລະພື້ນທີ່;

2. ເປັນເຈົ້າການໃນການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕາມຊາຍແດນທີ່ຕິດກັບ ສປປ ລາວ;

3. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງຍຸຕິທຳ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການປະຕິບັດວຽກງານຢາເສບຕິດ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**16. ມາດຕາ 65/5 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານຢາເສບຕິດ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃນການຊຸກຍູ້, ສົ່ງເສີມ, ຄຸ້ມຄອງ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກ່ຽວກັບ ການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ພ້ອມທັງໃຫ້ການຮ່ວມມືກັບຂະແໜງການປ້ອງກັນຄວາມສະຫງົບ ແລະ ຂະແໜງການທີ່ກ່ຽວຂ້ອງ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

17. ມາດຕາ 75/1 ມາດຕະການທາງອາຍາ

ຜູ້ຖືກຫາ ທີ່ຮັບສາລະພາບ ຫຼື ຜູ້ຖືກຊັດທອດ ໂດຍມີຫຼັກຖານໜັກແໜ້ນ ຮັດກຸມ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 3. ມາດຕາ 34 ວັກທີຫົກ ແລະ ຂໍ້ 5. ມາດຕາ 36 ວັກທີຫ້າ ຂອງກົດໝາຍສະບັບນີ້ ຈະຖືກລົງໂທດ ຕາມປະເພດຢາເສບຕິດ ທີ່ໄດ້ກຳນົດໄວ້ໃນມາດຕາ 314 ຫາ 325 ຂອງປະມວນກົດໝາຍອາຍາ.

ໃນກໍລະນີ ຜູ້ຖືກຫາທີ່ຖືກຊັດທອດ ໂດຍບໍ່ມີຂອງກາງ ແຕ່ມີຫຼັກຖານໜັກແໜ້ນຮັດກຸມ ທີ່ຢັ້ງຢືນໄດ້ວ່າຜູ້ກ່ຽວເປັນຜູ້ກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 5. ມາດຕາ 36 ວັກທີສີ່ ຂອງກົດໝາຍສະບັບນີ້ ຈະຖືກລົງໂທດຕ່ຳສຸດ ຂອງວັກທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 314 ຫາ 325 ຂອງປະມວນກົດໝາຍອາຍາ.

## ມາດຕາ 3 ການປັບປຸງແທນເນື້ອໃນບາງມາດຕາຂອງກົດໝາຍ

ກົດໝາຍສະບັບນີ້ ປ່ຽນແທນເນື້ອໃນ ມາດຕາ 9, 10, 34, 35, 36, 50, 56, 61, 63, 64 ແລະ ມາດຕາ 65 ຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ 10/ສພຊ, ລົງວັນທີ 25 ທັນວາ 2007 ແລະ ເພີ່ມມາດຕາ 65/1, 65/2, 65/3, 65/4, 65/5 ແລະ ມາດຕາ 75/1.

## ມາດຕາ 4 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດທັນທີ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ ແລະ ໃຫ້ພິມລົງຈົດໝາຍເຫດທາງລັດຖະການ ຕາມພາຍຫຼັງ.

ຂໍ້ກຳນົດ, ບົດບັນຍັດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ